# ການອ່ານແລະຂຽນໜັງສືຂອງພາສາໂດຍກຳເນີດ
# ແບບຄັດເລືອກຜູ້ສະມັກຮຽນ
# (ພາສາລາວ)

ສະບາຍດີນັກຮຽນທີ່ຮັກແພງ :

ຍິນດີຕ້ອນຮັບສູໂຮງຮຽນຂອງພວກເຮົາ.

ເຈັ້ຽຟອມນີ້ຈະຊ່ວຍພວກເຮົາໃນການຕັດສິນໃຈວ່າ ຫ້ອງໃດເໝາະທີ່ສຸດສຳຫລັບລະດັບຄວາມຮູ້ຂອງທ່ານ.

ກະລຸນາ ຕອບຄຳຖາມເຫລົ່ານີ້ດ້ວຍຕົນເອງ.

ຖ້າທ່ານບໍ່ສາມາດຕອບຄຳຖາມເຫລົ່ານີ້ໝົດທຸກຂໍ້ໄດ້, ໃຫ້ພຽງແຕ່ຕື່ມພາກສ່ວນທີ່ທ່ານສາມາດຕອບໄດ້ ແລະປະພາກສ່ວນທີ່ເຫລືອວ່າງໄວ້.

ຂໍຂອບໃຈ.

ວັນນີ້ ວັນທີ : ____________________

ຊື່ : ______________________________________________

ບ່ອນຢູ່ : ______________________________________________

______________________________________________

ເບີໂທລະສັບ : ______________________________________________

ເກີດວັນທີ : ______________________________________________

---

1. ທ່ານເກີດຢູ່ໃສ?

______________________________________________

2. ທ່ານເຂົ້າມາຢູ່ອະເມລິກາເມືອປີໃດ?

______________________________________________

3. ທ່ານຮຽນໜັງສືໃນປະເທດຂອງທ່ານໄດ້ຈັກປີ?

______________________________________________

4. ທ່ານເຄີຍເຂົ້າຮຽນພາສາອັງກິດຢູ່ໃນອະເມລິກາມາກ່ອນຫລືບໍ?

______________________________________________

5. ເຈົ້າແຕ່ງງານແລ້ວຫລືຍັງ?

______________________________________________

6. ເຈົ້າມີລູກບໍ?

______________________________________________

7. ທ່ານເວົ້າພາສາຫຍັງພາຍໃນຄອບຄົວຂອງທ່ານ?

______________________________

8. ທ່ານອ່ານໜັງສືພິມຫລືນິຕະຍະສານພາສາລາວຫລືບໍ່?

______________________________

9. ທ່ານເຮັດວຽກແມ່ນຫຍັງ?

______________________________

10. ທ່ານມັກເຮັດຫຍັງໃນເວລາວ່າງ?

______________________________

ຂໍຂອບໃຈທີ່ໄດ້ຕອບຄຳຖາມເຫລົ່ານີ້.

---

ໃນໜ້າຕໍ່ໄປນີ້ ແມ່ນເນື້ອເລື່ອງຕ່າງ ໆ ກ່ຽວກັບນັກຮຽນ
ທີ່ເຄີຍເຂົ້າໄປໂຮງຮຽນເພື່ອຮຽນພາສາອັງກິດ.

ກະລຸນາ ອ່ານເນື້ອເລື່ອງເຫລົ່ານີ້.

ເນື້ອເລື່ອງທີນຶ່ງ.

ຂ້ອຍດີໃຈ.

ຂ້ອຍຮູ້ສຶກວ່າ ດຽວນີ້ຂ້ອຍກຳລັງຮຽນເອົາຄວາມຮູ້.

ຂ້ອຍກຳລັງຮຽນເວົ້າພາສາອັງກິດ.

ຂ້ອຍກຳລັງເລີ່ມຕົ້ນຊີວິດໃໝ່ໃນປະເທດນີ້.

ຢູ່ໃນໂຮງຮຽນ, ເພື່ອນັກຮຽນແລະຄູຂອງຂ້ອຍໄດ້ຊ່ວຍ ຂ້ອຍໃນການຮຽນ.

---

ເນື້ອເລື່ອງທີສອງ.

ລູກຊາຍຂອງຂ້ອຍເວົ້າພາສາອັງກິດ.

ລາວເວົ້າພາສາອັງກິດນຳເພື່ອນລາວ.

ຂ້ອຍເວົ້າພາສາລາວນຳລາວ.

ລາວເວົ້ານຳຂ້ອຍເປັນພາສາອັງກິດ.

ການເວົ້າພາສາອັງກິດ ຍາກຫລາຍສຳຫລັບຂ້ອຍ.

ເພາະສະນັ້ນ ດຽວນີ້ຂ້ອຍມາໂຮງຮຽນແຫ່ງນີ້ ເພື່ອຮຽນ ພາສາອັງກິດ.

ເນື້ອເລື່ອງທີສາມ.

ຂ້ອຍມາປະເທດອະເມລິກາໃນປີ 1982.

ຂ້ອຍເຂົ້າມາໂຮງຮຽນຜູ້ໃຫຍ່ນີ້, ເພາະວ່າຂ້ອຍຕ້ອງການຮຽນພາສາອັງກິດ. ມື້ທຳອິດທີ່ມາໂຮງຮຽນ, ຂ້ອຍຮູ້ສຶກຕົກໃຈ.

ຕອນທີ່ຂ້ອຍຍັງນ້ອຍ, ຂ້ອຍບໍ່ສາມາດໄປໂຮງຮຽນ. ຂ້ອຍຕ້ອງໄປເຮັດວຽກຊ່ວຍຄອບຄົວຂອງຂ້ອຍ.

ມື້ທຳອິດທີ່ຂ້ອຍມາໂຮງຮຽນຜູ້ໃຫຍ່ແຫ່ງນີ້, ຂ້ອຍບໍ່ຈັກວ່າຈະເປັນແນວໃດ. ແຕ່ທ່ານຄູເປັນຄົນດີຫລາຍ, ແລະນັກຮຽນທຸກຄົນກໍດີເຊັ່ນດຽວກັນ. ດຽວນີ້ຂ້ອຍບໍ່ຮູ້ສຶກຕົກໃຈແລ້ວ.

---

ເນື້ອເລື່ອງທີສີ່.

ຂ້ອຍອາຍຸໄດ້ 25 ປີ. ຂ້ອຍມີລູກສາວສອງຄົນ. ຂ້ອຍມາອະເມລິການີ້, ເພາະວ່າຂ້ອຍຕ້ອງການໃຫ້ລູກສາວຂອງຂ້ອຍມີຊີວິດທີ່ດີຂຶ້ນ. ຂ້ອຍຢາກໄດ້ວຽກທີ່ດີ.

ດຽວນີ້ ຂ້ອຍເຂົ້າໂຮງຮຽນຜູ້ໃຫຍ່. ພວກເຮົາຮຽນເວົ້າພາສາອັງກິດຢູ່ໃນຫ້ອງຮຽນ. ຂ້ອຍພະຍາຍາມຮຽນເວົ້າພາສາອັງກິດຢູ່ເຮືອນ, ແຕ່ມັນບໍ່ງ່າຍ. ເພື່ອນຂອງຂ້ອຍໝົດທຸກຄົນເວົ້າພາສາລາວ. ລາງເທື່ອຂ້ອຍກໍເບິ່ງລາຍການໂທລະທັດເປັນພາສາອັງກິດ.

ການຊອກຫາເວລາມາໂຮງຮຽນບໍ່ແມ່ນເລື່ອງງ່າຍ. ຂ້ອຍເຮັດໄປນີ້ ກໍເພື່ອລູກສາວຂອງຂ້ອຍ.

ພວກເຮົາຫວັງວ່າທ່ານຄົງຈະມັກເລື່ອງຂອງນັກຮຽນທີ່ເຂົ້າມາຮຽນພາສາອັງກິດ.

ໃນບັນທັດຕໍ່ໄປນີ້, ໃຫ້ພະຍາຍາມຂຽນບາງສິ່ງບາງຢ່າງກ່ຽວກັບທ່ານເອງ.  ກະລຸນາ ບອກພວກເຮົາເປັນຫຍັງທ່ານຈິ່ງຢາກຮຽນພາສາອັງກິດ ຫລືສິ່ງອື່ນໃດກໍໄດ້ ທີ່ທ່ານຕ້ອງການບອກພວກເຮົາ.